ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                                                      ເລກທີ 081/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2017

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານທ່ອງທ່ຽວ ຊຸມປີຜ່ານມາ ແລະ ທິດທາງແຜນພັດທະນາ ປີ 2018

- ອີງຕາມ ມາດຕາ 60 ຂໍ້ 8 ຂອງກົດໝາຍ ວ່າດ້ວຍສະແຫ່ງຊາດ ກ່ຽວກັບສິດ ແລະ ໜ້າທີ່ ຂອງກອງປະຊຸມສະພາແຫ່ງຊາດ ໃນການພິຈາລະນາ ຮັບຮອງເອົາບັນຫາສຳຄັນພື້ນຖານ ຂອງປະເທດຊາດ ແລະ ວຽກງານອື່ນ ທີ່ສຳຄັນ.
- ອີງຕາມ ບົດລາຍງານຂອງລັດຖະບານ ສະບັບເລກທີ 747/ຖວທ, ລົງວັນທີ 18 ຕຸລາ 2017 ກ່ຽວກັບການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວ ຊຸມປີຜ່ານມາ ແລະ ທິດທາງແຜນພັດທະນາ ປີ 2018.

ຜ່ານການຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວ ຊຸມປີຜ່ານມາ ແລະ ທິດທາງແຜນພັດທະນາ ປີ 2018 ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວ ໃນຊຸມປີຜ່ານມາ.**

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ລັດຖະບານ ທີ່ໄດ້ຖືເອົາການທ່ອງທ່ຽວ ເປັນໜຶ່ງໃນຂະແໜງການຍຸດທະສາດ ທີ່ສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ສະເພາະໜ້າ ແລະ ຍາວນານ ໂດຍເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ວິໄສທັດ, ຍຸດທະສາດ ໃຫ້ເປັນແຜນພັດທະນາການທ່ອງທ່ຽວ ໃນແຕ່ລະໄລຍະ, ເອົາໃຈໃສ່ສ້າງ, ປັບປຸງກົດໝາຍ ແລະ ອອກນິຕິກຳລຸ່ມກົດໝາຍຫຼາຍສະບັບ ເພື່ອເປັນເຄື່ອງມືໃນການຄຸ້ມຄອງການເຄື່ອນໄຫວວຽກງານທ່ອງທ່ຽວ ເປັນຕົ້ນແມ່ນ ການພັດທະນາການທ່ອງທ່ຽວ ທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ຢ່າງຕໍ່ເນື່ອງ ຕາມທິດສີຂຽວ ແລະ ຍືນຍົງ ໂດຍການມີສ່ວນຮ່ວມຂອງ ພາກລັດ, ຜູ້ປະກອບການ ແລະ ປະຊາຊົນລາວບັນດາເຜົ່າ ເຮັດໃຫ້ບັນດາກິດຈະການ ການທ່ອງທ່ຽວ ໄດ້ຮັບການພັດທະນາ ທັງດ້ານປະລິມານ ແລະ ຄຸນນະພາບ, ສາມາດດຶງດູດນັກທ່ອງທ່ຽວເຂົ້າມາ ສປປ ລາວ ແລະ ສ້າງລາຍຮັບນັບມື້ເພີ່ມຂຶ້ນ ທັງໄດ້ປະກອບສ່ວນສ້າງວຽກເຮັດງານທຳ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ ທັງໃນຕົວເມືອງ ແລະ ຊົນນະບົດ ໃຫ້ດີຂຶ້ນກວ່າເກົ່າ;

ຄຽງຄູ່ກັນນັ້ນ ກອງປະຊຸມ ຍັງເຫັນວ່າການພັດທະນາການທ່ອງທ່ຽວ ຍັງປະເຊີນໜ້າກັບຫຼາຍບັນຫາ ຄື ຄວາມຫຍຸ້ງຍາກດ້ານງົບປະມານ ເພື່ອພັດທະນາແຫຼ່ງທ່ອງທ່ຽວ, ການແບ່ງຂັ້ນຄຸ້ມຄອງ, ການປະສານສົມທົບລະຫວ່າງຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວ ແລະ ຄ່ອງຕົວ, ການໂຄສະນາການທ່ອງທ່ຽວ ຍັງບໍ່ທັນກວ້າງຂວາງ, ການບໍລິການການທ່ອງທ່ຽວ ຍັງບໍ່ທັນມີຄຸນນະພາບ ເປັນຕົ້ນ ຄ່າບໍລິການຍັງສູງ; ການພັດທະນາບຸກຄະລາກອນ ແລະ ຜະລິດຕະພັນຮັບໃຊ້ການທ່ອງທ່ຽວ ຍັງບໍ່ທັນມີຄວາມຫຼາກຫຼາຍ.

**ມາດຕາ 2 ຮັບຮອງເອົາແຜນພັດທະນາວຽກງານທ່ອງທ່ຽວ ໃນປີ 2018**

ກອງປະຊຸມ ເຫັນດີຮັບຮອງເອົາບັນດາຄາດໝາຍຕົ້ນຕໍ ກ່ຽວກັບການພັດທະນາວຽກງານທ່ອງທ່ຽວ ໃນປີ 2018 ຄືດັ່ງນີ້:

1. ສູ້ຊົນດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ ບໍ່ໃຫ້ຫຼຸດ 5 ລ້ານເທື່ອຄົນ ແລະ ສ້າງລາຍຮັບໃຫ້ໄດ້ປະມານ 900 ລ້ານໂດລາສະຫະລັດ;

2. ສືບຕໍ່ປັບປຸງ ແລະ ສ້າງບັນດານິຕິກຳລຸ່ມກົດໝາຍ ທີ່ຈຳເປັນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ, ສົ່ງເສີມວຽກງານການທ່ອງທ່ຽວ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວທຸລະກິດບໍລິການ ການທ່ອງທ່ຽວ ເປັນຕົ້ນ ການຈັດລະດັບມາດຕະຖານ ສະຖານທີ່ທ່ອງທ່ຽວ, ຂັ້ນໂຮງແຮມ ແລະ ຣີສອດ, ເຮືອນພັກແຮມປະຊາຊົນ, ມາດຕະຖານເມືອງທ່ອງທ່ຽວ, ມາດຕະຖານການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ແລະ ອື່ນໆ, ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມທຸລະກິດທ່ອງທ່ຽວ, ການຄຸ້ມຄອງການເກັບຄ່າບໍລິການຕ່າງໆ ທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບໃນທົ່ວປະເທດ.

3. ສືບຕໍ່ສຳຫຼວດ, ພັດທະນາ ແລະ ຂະຫຍາຍກິດຈະການການທ່ອງທ່ຽວ ທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ຢ່າງມີຈຸດສຸມ, ປັບປຸງຄຸນນະພາບການທ່ອງທ່ຽວ ໂດຍການມີສ່ວນຮ່ວມຂອງ ພາກລັດ, ຜູ້ປະກອບການ ແລະ ປະຊາຊົນລາວບັນດາເຜົ່າ ໃນນີ້ ສູ້ຊົນສຳຫຼວດ, ກຳນົດຂອບເຂດແຫຼ່ງທ່ອງທ່ຽວບູລິມະສິດ ໃຫ້ສຳເລັດແຂວງລະ 5 ແຫ່ງ; ພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ທັງພາຍໃນ ແລະ ຕ່າງປະເທດ;

4. ຊຸກຍູ້ ສົ່ງເສີມການໂຄສະນາເຜີຍແຜ່ບັນດາກິດຈະກຳ, ຂໍ້ມູນ-ຂ່າວສານ ລວມທັງການຈັດວາງສະແດງການທ່ອງທ່ຽວ ຢູ່ພາຍໃນ ແລະ ຕ່າງປະເທດ ດ້ວຍຫຼາຍຮູບການ ໂດຍຜ່ານສື່ຕ່າງໆ;

5. ສົ່ງເສີມການພັດທະນາບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວ ທັງດ້ານປະລິມານ ແລະ ຄຸນນະພາບ, ການພັດທະນາຫຼັກສູດ ແລະ ການຈັດຝຶກອົບຮົມ ບຳລຸງສ້າງໄລຍະສັ້ນ, ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ ພະນັກງານຄຸ້ມຄອງ, ພະນັກງານນຳທ່ຽວ, ພະນັກງານບໍລິການ ໂດຍການຮ່ວມມື ກັບສະຖານການສຶກສາ, ຜູ້ປະກອບການ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການພັດທະນາວຽກງານທ່ອງທ່ຽວ ໃນໄລຍະໃໝ່.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາວຽກງານທ່ອງທ່ຽວ ໃນປີ 2018**

ກອງປະຊຸມ ເຫັນດີເປັນເອກະພາບຮັບຮອງແຜນໂຄງການ ແລະ 7 ມາດຕະການ ໃນການຈັດຕັ້ງປະຕິບັດແຜນພັດທະນາວຽກງານທ່ອງທ່ຽວ ໃນປີ 2018 ຕາມການສະເໜີຂອງລັດຖະບານ. ກອງປະຊຸມ ມອບໃຫ້ລັດຖະບານ ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ຮີບຮ້ອນສ້າງນິຕິກຳໃຕ້ກົດໝາຍ ກ່ຽວກັບ ລະບຽບການການຄຸ້ມຄອງແຫຼ່ງທ່ອງທ່ຽວ ແລະ ການຄຸ້ມຄອງເມືອງທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການທ່ອງທ່ຽວ ມາດຕາ 70 ແລະ 73; ປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຕຳຫຼວດທ່ອງທ່ຽວ; ສ້າງລະບຽບການເກັບຄ່າທຳນຽມ ຜ່ານປະຕູດຽວ ບົນພື້ນຖານການປະສານສົມທົບລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງ ຂອງລັດ;

2. ຮີບຮ້ອນຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ເພື່ອພັດທະນາການທ່ອງທ່ຽວໃນລະດັບຕ່າງໆ ຢ່າງມີຈຸດສຸມ, ທັງປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວທີ່ມີແລ້ວ ໃຫ້ມີຄຸນນະພາບ, ຈັດກິດຈະກຳ ທີ່ຫຼາກຫຼາຍ, ຄົບວົງຈອນ ແລະ ສ້າງແຜນການທ່ອງທ່ຽວ ທີ່ເປັນວົງຈອນເຊື່ອມຕໍ່ລະຫວ່າງແຂວງຕໍ່ແຂວງ ແລະ ບັນດາແຂວງ ທີ່ມີຊາຍແດນເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງ ໂດຍເລັ່ງໃສ່ພັດທະນາແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ໂດດເດັ່ນ, ເປັນເອກະລັກ ແລະ ເປັນທ່າແຮງ ຂອງຊາດ, ຂອງທ້ອງຖິ່ນ ແລະ ຈັດສັນງົບປະມານເຂົ້າໃນການພັດທະນາວຽກງານທ່ອງທ່ຽວ ຢ່າງເໝາະສົມ ແລະ ຊຸກຍູ້ສົ່ງເສີມຜູ້ປະກອບການ ໃຫ້ມີສ່ວນຮ່ວມໃນການລົງທຶນ ເພື່ອພັດທະນາແຫຼ່ງທ່ອງທ່ຽວ;

3. ສືບຕໍ່ຄົ້ນຄວ້າການຍົກເວັ້ນ ຫຼື ຫຼຸດຜ່ອນຄ່າທຳນຽມວີຊາການທ່ອງທ່ຽວ ຂອງຕະຫຼາດເປົ້າໝາຍ, ແກ້ໄຂການເກັບຄ່າບໍລິການການທ່ອງທ່ຽວ ທີ່ຊໍ້າຊ້ອນ ແລະ ມີລາຄາແພງ, ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສະມາຄົມທຸລະກິດການທ່ອງທ່ຽວ ຢູ່ຂັ້ນທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ, ເພີ່ມທະວີການຮັກສາຄວາມປອດໄພ ຂອງນັກທ່ອງທ່ຽວ ແລະ ອຳນວຍຄວາມສະດວກ ດ້ານການບໍລິການ ແລະ ອະນຸຍາດເຂົ້າ-ອອກປະເທດ ໃຫ້ແກ່ນັກທ່ອງທ່ຽວ ຕາມລະບຽບການ ທີ່ລັດວາງອອກ;

4. ຮີບຮ້ອນ ປັບປຸງກົງຈັກການຈັດຕັ້ງ, ການແບ່ງຂັ້ນຄຸ້ມຄອງ ຢູ່ຂັ້ນກະຊວງ ແລະ ຂັ້ນແຂວງກ່ຽວກັບວຽກງານທ່ອງທ່ຽວ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ, ເພີ່ມທະວີການປະສານສົມທົບ ລະຫວ່າງສູນກາງ ກັບທ້ອງຖິ່ນ ແລະ ບັນດາຂະແໜງການ ທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບ ໃນການຄຸ້ມຄອງວຽກງານການທ່ອງທ່ຽວ;

5. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ຜູ້ປະກອບການ ແລະ ປະຊາຊົນລາວບັນດາເຜົ່າ ປະກອບສ່ວນໃນການເປັນເຈົ້າພາບທີ່ດີ ແລະ ເຂົ້າຮ່ວມກິດຈະກຳທ່ອງທ່ຽວ ໃນປີທ່ອງທ່ຽວລາວ ຢ່າງເປັນຂະບວນຟົດຟື້ນ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

– ມອບໃຫ້ ລັດຖະບານ ຊີ້ນຳ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

– ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການວັດທະນະທຳ-ສັງຄົມ ແລະ ບັນດາກຳມາທິການ ທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.**

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້